**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1040 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 20 ເມສາ 2026

# ຂໍ້ຕົກລົງ
# ວ່າດ້ວຍການກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ

- ອີງຕາມ ກົດໝາຍ ວ່າດ້ວຍມາດຕະຖານ ສະບັບເລກທີ 49/ສພຊ, ລົງວັນທີ 18 ກໍລະ ກົດ 2014;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມມາດຕະຖານ ແລະ ວັດແທກ ສະບັບເລກທີ 1581/ກມວ, ລົງວັນທີ 27 ມີນາ 2026.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ ທີ່ຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ເພື່ອໃຫ້ຖືກຕ້ອງສອດຄ່ອງກັບກົດໝາຍ, ລະບຽບການ, ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ແນໃສ່ຮັບປະກັນປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ການກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ

ການກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ ແມ່ນການຕິດຕາມ ກວດກາ, ກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ ທີ່ຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ໃຫ້ມີຄວາມຖືກຕ້ອງສອດຄ່ອງກັບກົດໝາຍ, ລະບຽບການ, ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ.

### ມາດຕາ 3 ອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ນ້ຳຢາງສົດ** ໝາຍເຖິງ ນ້ຳຢາງພາລາທີ່ໄດ້ຈາກຕົ້ນຢາງ;
2. **ຢາງກົ້ນຖ້ວຍ** ໝາຍເຖິງ ຢາງພາລາທີ່ເກີດຈາກນ້ຳຢາງທີ່ກ້າມ ຫຼື ແຂງຕົວ ດ້ວຍການນຳໃຊ້ອາຊິດ ຫຼື ຢາງ ທີ່ແຂງຕົວໂດຍທຳມະຊາດ ຫຼື ຢາງທີ່ແຂງຕົວໂດຍອັດຕະໂນມັດ ແລະ ອື່ນໆ ພາຍໃນຖ້ວຍຮອງນ້ຳຢາງ ຫຼື ອາດຈະແຂງຕົວພາຍໃນພາຊະນະອື່ນ ທີ່ອາດຈະແຫ້ງດີ, ແຫ້ງບາງສ່ວນ ຫຼື ບໍ່ແຫ້ງເລີຍ.

3. **ຢາງແຜ່ນລີດ ແລະ ລົມຄວັນ** ໝາຍເຖິງ ຜະລິດຕະພັນຢາງພາລາທຳມະຊາດຂັ້ນຕົ້ນ ທີ່ນຳເອົານ້ຳຢາງສົດ ມາປະສົມກັບກົດໃຫ້ຈັບໂຕເປັນກ້ອນ, ລີດເປັນແຜ່ນຜ່ານລູກກິ້ງ ໃຫ້ມີລວດລາຍ ແລ້ວນຳໄປອົບຄວັນ ດ້ວຍຄວາມຮ້ອນປະມານ 60-70 ອົງສາ;

4. **ຢາງກ້ອນອັດແໜ້ນ** ໝາຍເຖິງ ຢາງທຳມະຊາດ ທີ່ໄດ້ຈາກການນຳເສດຢາງພາລາ ກ້ອນຖ້ວຍ ຫຼື ຢາງເຄບ ມາຜ່ານຂະບວນການສັບ, ບົດໃຫ້ລະອຽດ ແລະ ລ້າງສະອາດ ແລ້ວນຳໄປອັດເປັນກ້ອນສີ່ຫຼ່ຽມ ຕາມມາດຕະຖານກຳນົດໄວ້;

5. **ແຜ່ນຢາງ** ໝາຍເຖິງ ຜະລິດຕະພັນຢາງທຳມະຊາດທີ່ຜ່ານຂະບວນການລີດ ໃຫ້ມີລັກສະນະເປັນແຜ່ນ ມີຄວາມຍືດຢຸ່ນ ຄວາມໜາ ແລະ ຄວາມກວ້າງ ຕາມທີ່ຕ້ອງການ;

6. **ແຜ່ນຢາງທີ່ໄດ້ມາຈາກການແຂງຕົວ ແລະ ນ້ຳຢາງ** ໝາຍເຖິງ ແຜ່ນຢາງພາລາທີ່ໄດ້ຈາກນ້ຳຢາງກ້ານຢ່າງສົມບູນ ແລ້ວນຳໄປລີດຜະລິດເປັນຢາງແຜ່ນ;

7. **ເສດຢາງກ້ອນອັດແໜ້ນ** ໝາຍເຖິງ ນ້ຳຢາພາລາທີ່ຈັບໂຕເປັນກ້ອນພາຍໃນຖ້ວຍຮັບນ້ຳຢາງຈາກການປອດນ້ຳກົດ ໂດຍມີການລອບລອມແລ້ວນຳມາອັດແໜ້ນລວມກັນ.

8. **ຜະລິດຕະພັນຢາງພາລາ** ໝາຍເຖິງ ຢາງພາລາທີ່ຜ່ານຂະບວນການປຸງແຕ່ງເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ເຊັ່ນ: ເປັນຢາງກ້ອນອັດແໜ້ນ, ຢາງແຜ່ນ, ຢາງແຜ່ນອົບຄວັນ ແລະ ຮູບການອື່ນ;

9. **ຄຸນນະພາບຂອງຢາງພາລາ** (**Plasticity Retention Index: PRI**) ໝາຍເຖິງ ຄ່າອ່ອນໂຕຂອງຢາງ ຫຼັງຈາກອົບໃນອຸນຫະພູມ 140°C ຄ່າ (PRI) ສະແດງເຖິງຄວາມສາມາດ ໃນການຕ້ານທານຕໍ່ການເຊື່ອມສະພາບຂອງຢາງທີ່ອົບໃນອຸນຫະພູມສູງ, ຊຶ່ງຢາງທີ່ມີຄ່າ (PRI) ສູງສະແດງວ່າຢາງມີການຄືນຮູບ ຫຼື ຫົດກັບມາຢູ່ໃນສະພາບເກົ່າ ແລະ ມີຄວາມສາມາດໃນການຕ້ານທານການແຕກຫັກໄດ້ເປັນຢ່າງດີ;

10. **ຢາງທຳມະຊາດ** (**Natural Rubber - NR**) ໝາຍເຖິງ ຢາງທີ່ໄດ້ມາຈາກນ້ຳຢາງຂຸ້ນ ຂອງຕົ້ນຢາງ ຊຶ່ງມີຄວາມຕ້ານທານແຮງດັນສູງ ແລະ ທົນທານຕໍ່ການຫຼູ້ຍຫ້ຽນ ເປັນຕົ້ນ ການບິ່ນ, ການຕັດ ຫຼື ການຈີກຂາດ. ນອກນັ້ນ, ຍັງມີຄວາມທົນທານຕໍ່ຄວາມຮ້ອນແສງ ແລະ ໂອໂຊນໄດ້ໃນລະດັບປານກາງເທົ່ານັ້ນ;

11. **ຢາງສະເຕລີນ-ບິວຕາໄດອີນ** (**Styrene Butadiene Rubber - SBR**) ໝາຍເຖິງ ຢາງສັງເຄາະ ທີ່ທົນທານຕໍ່ການຮຸກຖູໄດ້ດີ, ທົນຕໍ່ແຮງກະທົບໄດ້ດີ ມີຄວາມຍືດຢຸ່ນ ແລະ ທົນຕໍ່ແຮງດຶງສູງ, ແຕ່ມີຄວາມຕ້ານທານຕໍ່ແສງແດດໂອໂຊນອາຍນ້ຳ ແລະ ນ້ຳມັນບໍ່ໄດ້ດີ, ຊຶ່ງຢາງປະເພດນີ້ ໃຊ້ສຳລັບເຮັດຢາງຕີນລົດ ແລະ ຜະລິດຕະພັນອາໄຫຼ່ຍານພາຫະນະ ແລະ ຜະລິດຕະພັນຢາງກັນຈັກ;

12. **ຢາງໄນໄຕຼ** (**Nitrile Butadiene Rubber - NBR**) ໝາຍເຖິງ ຢາງທີ່ໃຊ້ສຳລັບຜະລິດຕະພັນອຸດສາຫະກຳ, ຊຶ່ງມີຄວາມຕ້ານທານ ໄດ້ດີຕໍ່ກັບນ້ຳມັນເຊື້ອໄຟ, ນ້ຳມັນທົ່ວໄປ ແລະ ທາດແຫຼວທີ່ເປັນໄຮໂດຼລິກ;

13. **ຢາງນີໂອພຼີນ** (**Chloroprene Rubber -CR**) ໝາຍເຖິງ ຢາງສັງເຄາະທີ່ ໄດ້ຈາກ Chloroprene Monomer ສາມາດຖືກກະກອນໄດ້ຄືກັນກັບຢາງທຳມະຊາດ ເຮັດໃຫ້ມີຄວາມຕ້ານທານຕໍ່ແຮງດັນສູງ ແລະ ຢາງປະເພດນີ້ມີອົງປະກອບຫຼັກຄືອາຕອມຄຼໍລີນ (Cl), ຊຶ່ງມີຄຸນສົມບັດພິເສດ ທົນຕໍ່ການລາມໄຟ, ທົນຕໍ່ນ້ຳມັນ ແລະ ສານເຄມີ;

14. **ຢາງໄນໂຕຼໄຮໂດຼເຈນ** (**Hydrogenated Nitrile Rubber -HNBR**) ເປັນສານປະກອບຢາງໄນໄຕຼ NBR ທີ່ເຕີມໄຮໂດຼເຈນ ເຮັດໃຫ້ມີຄວາມຕ້ານທານຕໍ່ຄວາມຮ້ອນ, ສານເຄມີ ແລະ ໂອໂຊນສູງກວ່າຢາງໄນໄຕຼ NBR. ນອກນັ້ນ, ຍັງຮັບປະກັນຄວາມທົນທານຕໍ່ນ້ຳມັນ, ຊຶ່ງນິຍົມໃຊ້ໃນອຸດສາຫະກຳຍານພາຫະນະ ລວມເຖິງຊີນຮອງທໍ່ ແລະ ສາຍພານ.

15. **ຢາງໂພລີເທນ** (**Polyurethane - AU**) ໝາຍເຖິງ ຢາງທີ່ໄດ້ຮັບການຍອມຮັບໃນດ້ານຄວາມໝາຍມີຄວາມທົນທານຕໍ່ການຮຸກຖູ ແລະ ມີຄຸນສົມບັດທີ່ໂດດເດັ່ນໃນການອັດຂຶ້ນຮູບ ເປັນຕົ້ນ ອຸປະກອນ ໄຮໂດຼລິກ, ກະບອກສູບ ແລະ ວາວ;

16. **ຢາງເອທີລີນໂພຼພີລີນໄດອີນໂມໂນເມີ** (**Ethylene Propylene Diene Monomer - EPDM**) ໝາຍເຖິງ ຢາງອາເນກປະສົງທີ່ມີຄວາມຕ້ານທານຕໍ່ຄວາມຮ້ອນ, ຄວາມເປັນ, ໂອໂຊນ, ສານເຄມີ ເໝາະສຳລັບໃຊ້ງານກາງແຈ້ງ ຫຼື ສະພາບອາກາດຮຸນແຮງ, ຊຶ່ງທົນຕໍ່ລັງສີຢູວີ (UV) ໄດ້ດີ ແລະ ປ້ອງກັນການເສື່ອມສະພາບ, ແຕກລ້າວ, ເປື່ອຍ ແລະ ຮັກສາອາຍຸການໃຊ້ງານແບບຍາວນານ ເປັນຕົ້ນ ອຸປະກອນການແພດ, ຢາງໃນອຸດສາຫະກຳອາຫານ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ດຳເນີນທຸລະກິດຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຢາງພາລາ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດ, ສະຫຼາກ ແລະ ເຄື່ອງໝາຍ

**ມາດຕາ 5 ປະເພດຂອງຢາງພາລາ**

ຢາງພາລາ ມີ ຫົກ ປະເພດ ດັ່ງນີ້:

1. ນໍ້າຢາງສົດ;
2. ຢາງກົ້ນຖ້ວຍ;
3. ຢາງແຜ່ນລົດ ແລະ ລົມຄວັນ;
4. ຢາງກ້ອນອັດແໜ້ນ;
5. ແຜ່ນຢາງທີ່ໄດ້ມາຈາກການແຂງຕົວ ແລະ ນໍ້າຢາງ;
6. ແຜ່ນຢາງ, ກ້ອນຢາງ ແລະ ເສດຢາງກ້ອນອັດແໜ້ນ.

**ມາດຕາ 6 ສະຫຼາກ ແລະ ເຄື່ອງໝາຍ**

ຢາງພາລາ ທີ່ຜະລິດ, ປຸງແຕ່ງ, ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍ ຕ້ອງຕິດສະຫຼາກ ແລະ ເຄື່ອງໝາຍ ແລະ ໄວ້ດ້ານນອກຂອງພາຊະນະບັນຈຸໃຫ້ເຫັນໄດ້ງ່າຍ, ຈະແຈ້ງດີ ແລະ ບໍ່ສາມາດລຶບໄດ້, ເນື້ອໃນສະຫຼາກຕ້ອງ ຂຽນເປັນພາສາລາວ ຊຶ່ງມີເນື້ອໃນ ດັ່ງນີ້:

1. ຊື່ຜະລິດຕະພັນ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຢູ່ ສປປ ລາວ
2. ປະເພດ, ຊັ້ນຄຸນນະພາບ
3. ຊື່ໂຮງງານ ແລະ ສະຖານທີ່ຕັ້ງ;
4. ນໍ້າໜັກ, ຫົວໜ່ວຍ (kg);
5. ວັນ, ເດືອນ, ປີ ຜະລິດ;
6. ເຄື່ອງໝາຍການຄ້າ;
7. ຊຸດຜະລິດ;
8. ຂໍ້ແນະນຳ ແລະ ການເກັບຮັກສາ;
9. ກາໝາຍມາດຕະຖານແຫ່ງຊາດ.

ສຳລັບສະຫຼາກ ແລະ ເຄື່ອງໝາຍ ທີ່ເປັນພາສາຕ່າງປະເທດ ຕ້ອງໄດ້ຮັບການແປເນື້ອໃນສອດຄ່ອງກັບ ພາສາລາວ ຈາກບໍລິສັດແປພາສາ ທີ່ໄດ້ຮັບອະນຸຍາດຖືກຕ້ອງຕາມກົດໝາຍ.

## ໝວດທີ 3
## ການສະເໜີຂໍກວດສອບ ແລະ ການຢັ້ງຢືນຄຸນນະພາບຢາງພາລາ

**ມາດຕາ 7 ການສະເໜີຂໍກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງສະເໜີຂໍກວດສອບ ແລະ ຢັ້ງຢືນຄຸນນະພາບ ຢາງພາລາ ໃຫ້ຍື່ນໜັງສືສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ ຫຼື ຂະແໜງກວດສອບຄຸນນະພາບຜະລິດຕະ ພັນ-ສິນຄ້າ ປະຈຳດ່ານເຂົ້າ-ອອກ ຊຶ່ງຕ້ອງປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມຂອງກົມມາດຕະຖານ ແລະ ວັດແທກ;
2. ສຳເນົາເອກະສານດຳເນີນທຸລະກິດການຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຢາງພາລາ ຈາກຂະແໜງການກ່ຽວຂ້ອງ;

3. ສຳເນົາໃບຢັ້ງຢືນແຜນການຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຮັບຮອງຈາກຂະແໜງອຸດສາຫະກຳ ແລະ ການຄ້າ ຖ້າມີ;

4. ສຳເນົາໃບຢັ້ງຢືນການໝາຍມາດຕະຖານແຫ່ງຊາດ ຈາກກົມມາດຕະຖານ ແລະ ວັດແທກ.

**ມາດຕາ 8 ການພິຈາລະນາອອກໃບຢັ້ງຢືນຄຸນນະພາບຢາງພາລາ**

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ກົມມາດຕະຖານ ແລະ ວັດແທກ ຫຼື ຂະແໜງກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈຳດ່ານເຂົ້າ-ອອກ ຕ້ອງດຳເນີນການກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ ຕາມຮູບແບບ ແລະ ຫຼັກການກວດສອບ ຕາມທີ່ກຳນົດໄວ້ໃນມາດຕາ 9 ແລະ 10 ຂອງຂໍ້ຕົກລົງສະບັບນີ້.

ກົມມາດຕະຖານ ແລະ ວັດແທກ ຫຼື ຂະແໜງກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈຳດ່ານເຂົ້າ-ອອກ ຕ້ອງພິຈາລະນາອອກໃບຢັ້ງຢືນຄຸນນະພາບຢາງພາລາ ທີ່ຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ພາຍໃນ ສິບວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານເປັນຕົ້ນໄປ.

## ໝວດທີ 4
## ຮູບແບບ ແລະ ຫຼັກການ ກວດສອບຄຸນນະພາບຢາງພາລາ

**ມາດຕາ 9 ຮູບແບບການກວດສອບຄຸນນະພາບຢາງພາລາ**

ການກວດສອບຄຸນນະພາບຢາງພາລາ ມີ ສາມ ຮູບແບບ ດັ່ງນີ້:

1. ກວດສອບຄຸນນະພາບຢາງພາລາ ຕາມການສະເໜີ;
2. ກວດສອບຄຸນນະພາບຢາງພາລາ ຕາມແຜນປົກກະຕິ ຫົກເດືອນ ແລະ ໜຶ່ງຄັ້ງຕໍ່ປີ;
3. ກວດສອບຄຸນນະພາບຢາງພາລາ ແບບກະທັນຫັນ ຈະໄດ້ດຳເນີນກວດກາ ຊຶ່ງບໍ່ໄດ້ແຈ້ງໃຫ້ຮູ້ລ່ວງໜ້າ.

**ມາດຕາ 10 ຫຼັກການກວດສອບຄຸນນະພາບຢາງພາລາ**

ການກວດສອບຄຸນນະພາບຢາງພາລາ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ການດຳເນີນການກວດສອບທຸກຄັ້ງ ຕ້ອງມີບັດເຈົ້າໜ້າທີ່ ຫຼື ພະນັກງານ ຊຶ່ງອອກໂດຍກົມມາດຕະຖານ ແລະ ວັດແທກ ຫຼື ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕາມການມອບໝາຍ;

2. ຖ້າຫາກຜົນການກວດສອບ ຖືກຕ້ອງສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ, ພະນັກງານ ຕ້ອງໄດ້ອອກໃບຢັ້ງຢືນຄຸນນະພາບຢາງພາລາ ເພື່ອຢັ້ງຢືນຄວາມຖືກຕ້ອງ;

3. ຫາກຜົນການກວດສອບຄຸນນະພາບ ບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ພະນັກງານກ່ຽວຂ້ອງ ຕ້ອງໄດ້ເຮັດບົດບັນທຶກ ແລະ ບໍ່ອອກໃບຢັ້ງຢືນຄຸນນະພາບຢາງພາລາ ຈົນກວ່າຈະປັບປຸງຄຸນນະພາບ ໃຫ້ຖືກຕ້ອງສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ.

## ໝວດທີ 5
## ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ

**ມາດຕາ 11 ສິດຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດຢາງພາລາ ມີສິດ ດັ່ງນີ້:

1. ບໍລິການ, ໂຄສະນາເຜີຍແຜ່ຄຸນນະພາບຢາງພາລາ ໃຫ້ຖືກຕ້ອງຕາມຄວາມເປັນຈິງ ພາຍຫຼັງໄດ້ຮັບການກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ;

2. ປົກປ້ອງສິດ ແລະ ຜົນປະໂຫຍດ ກ່ຽວກັບການດຳເນີນທຸລະກິດຂອງຕົນ;

3. ຮ້ອງຂໍຄວາມເປັນທຳ ຕໍ່ອົງການຄຸ້ມຄອງລັດກ່ຽວຂ້ອງ ຫາກເຫັນວ່າການກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ ບໍ່ໄດ້ຮັບຄວາມເປັນທຳ;

4. ສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ ຫຼື ຂະແໜງກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈຳດ່ານເຂົ້າ-ອອກ ເພື່ອກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ;

5. ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 12 ພັນທະຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດ ມີພັນທະ ດັ່ງນີ້:

1. ການຜະລິດ, ປຸງແຕ່ງ , ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍ ຢາງພາລາ ຕ້ອງໄດ້ຮັບການກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ ໃຫ້ມີຄວາມຖືກຕ້ອງສອດຄ່ອງກັບກົດໝາຍ, ລະບຽບການ, ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;

2. ຮັບປະກັນທາງດ້ານຄຸນນະພາບ ແລະ ປະລິມານຢາງພາລາ ທີ່ຕົນສະໜອງ;

3. ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ ສາເຫດຍ້ອນຄຸນນະພາບຢາງພາລາ ທີ່ບໍ່ຖືກຕ້ອງສອດຄ່ອງກັບກົດໝາຍ, ລະບຽບການ, ຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;

4. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ ຫຼື ພະນັກງານ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍ ໃນການລົງກວດກາຄຸນນະພາບຢາງພາລາ ແຕ່ລະຄັ້ງ;

5. ສະໜອງເອກະສານກ່ຽວຂ້ອງໃຫ້ຄົບຖ້ວນ ກ່ຽວກັບການສະເໜີຂໍກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ;

6. ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ການກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ;

7. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 13 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງ ຫຼື ບໍ່ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ ຫຼື ພະນັກງານ ໃນການໄປກວດສອບຄຸນນະພາບຢາງພາລາ;

2. ໂຄສະນາ ແລະ ສົ່ງເສີມຢາງພາລາ ທີ່ບໍ່ໄດ້ຜ່ານການກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ;

3. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບການກວດສອບຄຸນນະພາບຢາງພາລາ;

4. ໃຫ້, ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 14 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ຫ້າມຜູ້ດຳເນີນທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍຢາງພາລາ ທີ່ບໍ່ໄດ້ຜ່ານການກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ;

2. ສ້າງອຸປະສັກກີດຂວາງການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ໄປກວດກາ, ວິໄຈ, ກວດສອບ ແລະ ຢັ້ງຢືນຄຸນນະພາບນຢາງພາລາ;

3. ໃຫ້ສິນບົນ ແລະ ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ ແລະ ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ ຫຼື ພະນັກງານໄປກວດສອບຄຸນນະພາບຢາງພາລາ;

4. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບການກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 15 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ມີພຶດຕິກຳ ດັ່ງນີ້:

1. ຜູ້ທີ່ບໍ່ໄດ້ຮັບການແຕ່ງຕັ້ງໄປປະຕິບັດໜ້າທີ່ ໂດຍບໍ່ໄດ້ຮັບອະນຸຍາດ;
2. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງຕໍ່ຜູ້ດຳເນີນທຸລະກິດ;
3. ສວຍໃຊ້ ສິດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ພັກພວກຂອງຕົນ;
4. ກົດໜ່ວງ ຖ່ວງດຶງ ແລະ ແກ່ຍາວເວລາການພິຈາລະນາເອກະສານ;
5. ປອມແປງເອກະສານ ຫຼື ໃຊ້ເອກະສານປອມ, ເປີດເຜີຍຄວາມລັບທາງທຸລະກິດ;
6. ຂໍເອົາ, ທວງເອົາ, ຮັບສິນບົນ ຫຼື ຫາຜົນປະໂຫຍດອື່ນ ໂດຍບໍ່ຖືກຕ້ອງ;
7. ພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ

**ມາດຕາ 16 ການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ**

ການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ປະກອບມີ ດັ່ງນີ້:

1. ກົມມາດຕະຖານ ແລະ ວັດແທກ;
2. ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂະແໜງກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈຳຢູ່ດ່ານເຂົ້າ-ອອກ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງກົມມາດຕະຖານ ແລະ ວັດແທກ**

ກົມມາດຕະຖານ ແລະ ວັດແທກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ ໃຫ້ສັງຄົມຮັບຊາບ;

3. ເກັບຕົວຢ່າງຢາງພາລາໄປກວດສອບຄຸນນະພາບ ເພື່ອໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;

4. ອອກໃບຢັ້ງຢືນຄຸນນະພາບຢາງພາລາ ທີ່ຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຢາງພາລາ;

5. ການກວດສອບຄຸນນະພາບຢາງພາລາ ຕາມແຜນປົກກະຕິ ເດືອນລະຄັ້ງ ຫຼື ກວດແບບສຸກເສີນ;

6. ແນະນຳຜູ້ຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍຢາງພາລາ ກ່ຽວກັບຂັ້ນຕອນການແຈ້ງເອກະສານຂໍອະນຸຍາດໃນການກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ;

7. ເກັບຮັກສາ ແລະ ສະໜອງຂໍ້ມູນຕ່າງໆ ໃຫ້ພາກສ່ວນກ່ຽວຂ້ອງ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ;

8. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການກວດສອບຄຸນນະພາບຢາງພາລາ ໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;

9. ສະກັດກັ້ນ, ປັບໃໝ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານມາດຕະຖານ ແລະ ວັດແທກ ທີ່ກ່ຽວຂ້ອງກັບການກວດສອບຄຸນນະພາບຢາງພາລາ;

10. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາຕໍ່ພາກສ່ວນທີ່ກ່ຽວຂ້ອງ ແລະ ຂັ້ນເທິງຊາບ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາໃຫ້ສັງຄົມຮັບ;

2. ປະສານສົມທົບກັບກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ;

3. ຕິດຕາມ, ກວດກາ ແລະ ສະໜອງຂໍ້ມູນ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ;

4. ລາຍງານສະພາບການຕິດຕາມ, ກວດກາ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ ໃຫ້ກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບທຸກໆ ຫົກເດືອນ;

5. ປັບໃໝ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານມາດຕະຖານ ແລະ ວັດແທກ ທີ່ກ່ຽວຂ້ອງກັບການກວດສອບຄຸນນະພາບຢາງພາລາ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 19 ສິດ ແລະ ໜ້າທີ່ ໜ່ວຍງານກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈຳຢູ່ດ່ານເຂົ້າ-ອອກ**

ໜ່ວຍງານກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈຳດ່ານເຂົ້າ-ອອກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ ໃຫ້ສັງຄົມຮັບຊາບຢ່າງ ທົ່ວເຖິງ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

2. ເກັບຕົວຢ່າງຢາງພາລາໄປກວດສອບຄຸນນະພາບ ເພື່ອໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;

3. ອອກໃບຢັ້ງຢືນຄຸນນະພາບຢາງພາລາ ກ່ອນນຳເຂົ້າ ແລະ ສົ່ງອອກ;

4. ຫາກເຫັນວ່າບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ໜ່ວຍງານກວດສອບຄຸນນະພາບ ຕ້ອງເຮັດບົດບັນທຶກ ພ້ອມທັງລາຍງານໃຫ້ກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບຊາບ ແລະ ພິຈາລະນາແກ້ໄຂ;

7. ແຈ້ງສະພາບການ, ເຫດການ ຫຼື ຂະບວນການຕ່າງໆ ທີ່ກ່ຽວຂ້ອງກັບຄຸນນະພາບຢາງພາລາ ບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ໃຫ້ກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນທີ່ກ່ຽວຂ້ອງຮັບຊາບ;

8. ປັບໃໝ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານມາດຕະຖານ ທີ່ກ່ຽວຂ້ອງກັບການກວດສອບຄຸນນະພາບຢາງພາລາ;

9. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຢາງພາລາ ໃຫ້ກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ ປະຈຳວັນ, ອາທິດ, ເດືອນ ແລະ ປີ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 20 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມມາດຕະຖານ ແລະ ວັດແທກ ເປັນເຈົ້າການປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ໜ່ວຍງານກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ປະຈຳດ່ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສິບຫ້າ ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດຖະມົນຕີ

ມະໄລທອງ ກົມມະສິດ